# ແກ້ແຄ້ນ ຫຼື ຍົກໂທດ



# ແກ້ແຄ້ນ ຫຼື ຍົກໂທດ

ທ້າວ ໂຢເຊັບ ເກີດເມື່ອປະມານ 3900 ປີມາແລ້ວ. ໂຢເຊັບ ເກີດໃນແຜ່ນດິນ ການາອານ ຊຶ່ງໃນປັດຈຸບັນນີ້ ແມ່ນປະເທດອິດສະຣາເອນ.

ປື້ມເຫຼັ້ມນີ້ເປັນພຽງບົດສະຫຼຸບຂອງເລື່ອງເທົ່ານັ້ນ. ຖ້າທ່ານສົນໃຈຢາກຮູ້ລາຍລະອຽດ ທ່ານສາມາດອ່ານໄດ້ໃນພຣະຄຳພີ ປະຖົມມະການ ບົດທີ 37 ຫາ ບົດທີ 50.

ແຕ້ມໂດຍ: ນາງ ນາທາຊ່າ



ໂຢເຊັບ ອາໄສຢູ່ແຜ່ນດິນ ການາອານ ເມື່ອຫຼາຍປີມາແລ້ວ. ພໍ່ຂອງ ໂຢເຊັບ ມີຊື່ວ່າ ອິດສະຣາເອນ. ອິດສະຣາເອນ ເປັນຜູ້ຮັ່ງມີທີ່ສຸດໃນດິນແດນແຫ່ງນີ້. ລາວເປັນຊາວໄຮ່ຊາວນາ ແລະຍັງລ້ຽງແບ້ ແລະແກະອີກ ເປັນຈຳນວນຫຼວງຫຼາຍ.

ອິດສະຣາເອນ ມີເມຍທັງໝົດ 4 ຄົນ ແລະລູກຊາຍ 12 ຄົນ. ໂຢເຊັບ ເປັນລູກຊາຍຜູ້ທີ 11, ລາວຈຶ່ງມີອ້າຍ 10 ຄົນ ແລະນ້ອງຊາຍ 1 ຄົນ.

ປະເທດ ອິດສະຣາເອນ ໃນປັດຈຸບັນນີ້ແມ່ນໄດ້ຊື່ມາຈາກພໍ່ຂອງ ໂຢເຊັບ ຜູ້ນີ້.



ທຸກໆມື້ ໂຢເຊັບ ໄດ້ຊ່ວຍພວກອ້າຍລ້ຽງຝູງແບ້ຝູງແກະ. ເມື່ອອ້າຍຂອງ ໂຢເຊັບ ເຮັດແນວບໍ່ດີ ໂຢເຊັບ ມັກນໍາເລື່ອງໄປຟ້ອງຕໍ່ພໍ່.

ແຕ່ພໍ່ຮັກ ໂຢເຊັບ ຫຼາຍກວ່າລູກຊາຍອື່ນທັງໝົດ ເພາະ ໂຢເຊັບ ເປັນລູກກົກຂອງເມຍຜູ້ທີ່ເພິ່ນຮັກຫລາຍກວ່າໝູ່ ແລະເພາະ ໂຢເຊັບ ໄດ້ເກີດມາໃນເວລາທີ່ເພິ່ນມີອາຍຸຫຼາຍແລ້ວ.



ອິດສະຣາເອນ ໄດ້ມອບເສື້ອລ່າມຜືນໜຶ່ງທີ່ມີຫຼາຍສີສັນ ແລະ ງາມທີ່ສຸດໃຫ້ກັບ ໂຢເຊັບ. ພວກອ້າຍຂອງ ໂຢເຊັບ ຈຶ່ງໄດ້ອິດສາ ແລະຊັງ ໂຢເຊັບ ຫຼາຍ. ພວກເຂົາມັກເຮັດສິ່ງທີ່ບໍ່ດີໃສ່ ໂຢເຊັບ.



ໃນຄືນໜຶ່ງ ໂຢເຊັບ ໄດ້ຝັນວ່າ, ລາວເຮັດວຽກກັບພວກອ້າຍຢູ່ທີ່ທົ່ງນາ ແລະກຳລັງມັດເຂົ້າຢູ່. ເມື່ອມັດແລ້ວ ຟ່ອນເຂົ້າຂອງ ໂຢເຊັບ ກໍຕັ້ງຊື່ຂຶ້ນ. ສ່ວນຟ່ອນເຂົ້າຂອງພວກອ້າຍ ໄດ້ຕີວົງລ້ອມຟ່ອນເຂົ້າຂອງ ໂຢເຊັບ ແລະຂາບລົງຕໍ່ໜ້າຟ່ອນເຂົ້າຂອງລາວ.

ໂຢເຊັບ ໄດ້ເລົ່າຄວາມຝັນຂອງຕົນໃຫ້ພວກອ້າຍຟັງ ພວກເຂົາພາກັນເວົ້າໃຫ້ ໂຢເຊັບ ວ່າ: “ເຈົ້າຄິດວ່າ ເຈົ້າຈະໄດ້ເປັນກະສັດປົກຄອງພວກເຮົາຊັ້ນບໍ?”

ຍ້ອນຄວາມຝັນທີ່ ໂຢເຊັບ ເລົ່າມານັ້ນ ຍິ່ງເຮັດໃຫ້ພວກເຂົາຊັງ ໂຢເຊັບ ຫຼາຍຂຶ້ນຕື່ມ.



ຕໍ່ມາ ໂຢເຊັບ ໄດ້ຝັນອີກ ແລະໄດ້ເລົ່າສູ່ພໍ່ຟັງວ່າ, "ລູກຝັນເຫັນຕາເວັນ, ດວງເດືອນ ແລະດວງດາວ 11 ດວງກົ້ມຂາບລູກ."

ເມື່ອພໍ່ໄດ້ຍິນ ພໍ່ຈຶ່ງທ້ວງລາວວ່າ, "ລູກຄິດວ່າ ພໍ່ແມ່ແລະພວກອ້າຍນ້ອງ ຈະໄປກົ້ມຂາບເຈົ້າຊັ້ນບໍ?"

ເມື່ອພວກອ້າຍໄດ້ຍິນ ກໍຍິ່ງເຮັດໃຫ້ພວກອ້າຍອິດສາຊັງລາວຫຼາຍກວ່າເກົ່າ. ສ່ວນຜູ້ເປັນພໍ່ ກໍໄດ້ແຕ່ຄິດນຳເລື່ອງນັ້ນ.

ໃນເວລາຕໍ່ມາ ພວກອ້າຍຂອງ ໂຢເຊັບ ໄດ້ພາກັນອອກໄປລ້ຽງແບ້ແລະແກະ ຢູ່ຫ່າງໄກຈາກບ້ານ. ມື້ໜຶ່ງ ພໍ່ໄດ້ບອກ ໂຢເຊັບ ໃຫ້ໄປເບິ່ງພວກອ້າຍວ່າສະບາຍດີກັນຫຼືບໍ່.

ໂຢເຊັບ ໄດ້ເດີນທາງອອກຈາກບ້ານໄປ ເປັນເວລາ 2-3 ມື້ຈຶ່ງໄດ້ຮອດບ່ອນທີ່ພວກອ້າຍລ້ຽງຝູງສັດຢູ່.



ເມື່ອພວກອ້າຍເຫັນ ໂຢເຊັບ ກຳລັງຍ່າງທາງມາ ພວກເຂົາຈຶ່ງຄິດວາງແຜນເຮັດຮ້າຍໃສ່ ໂຢເຊັບ.

ພໍ ໂຢເຊັບ ມາຮອດ ພວກເຂົາກໍຈັບລາວ ໂຍນຖິ້ມລົງນ້ຳສ້າງທີ່ບໍ່ມີນ້ຳ ເພາະພວກເຂົາຢາກໃຫ້ ໂຢເຊັບ ຕາຍ ແລະບໍ່ຢາກເຫັນໜ້າຂອງລາວອີກຕໍ່ໄປ.



ພໍດີ ໃນຕອນແລງຂອງມື້ນັ້ນ ມີພວກພໍ່ຄ້າຕ່າງແດນ ເດີນທາງມາ ຜ່ານທາງນັ້ນ.

ອ້າຍຂອງ ໂຢເຊັບ ໄດ້ພາກັນເວົ້າວ່າ, “ພວກເຮົາໜ້າຈະຂາຍ ໂຢເຊັບ ເປັນຂ້າທາດໃຫ້ພວກເຂົາ ແລ້ວພວກເຮົາກໍຈະໄດ້ກຳໄລ.”

ພວກເຂົາກໍເລີຍໄດ້ຕົກລົງຂາຍ ໂຢເຊັບ ໃຫ້ກັບພວກພໍ່ຄ້າ ຕ່າງແດນ ເປັນເງິນ 20 ຫຼຽນ. ພວກອ້າຍໄດ້ແກ້ເອົາເສື້ອລ່າມຂອງ ໂຢເຊັບ ອອກ.



ພວກເຂົາຂ້າແບ້ ແລ້ວເອົາເສື້ອລ່າມຂອງ ໂຢເຊັບ ຈຸ່ມລົງໃນເລືອດແບ້ ແລ້ວເອົາໄປໃຫ້ພໍ່ເບິ່ງ ແລະເວົ້າວ່າ, “ພວກລູກໄດ້ພົບເສື້ອນີ້. ໃຫ້ພໍ່ເບິ່ງດູວ່າ ມັນແມ່ນເສື້ອຂອງລູກຊາຍພໍ່ບໍ?”

ພໍ່ຂອງ ໂຢເຊັບ ຮູ້ສຶກໂສກເສົ້າເສຍໃຈຫຼາຍ ຄິດວ່າສັດຮ້າຍຕ້ອງໄດ້ຂ້າ ໂຢເຊັບ ຕາຍໄປແທ້ໆ.

ພໍ່ຂອງ ໂຢເຊັບ ບໍ່ຍອມກິນເຂົ້າ ແລະໄດ້ແຕ່ຮ້ອງໄຫ້ເສຍໃຈນໍາ ໂຢເຊັບ ຕະຫຼອດເວລາ.



ໂຢເຊັບ ໄດ້ຖືກຂາຍເປັນທາດໃນ ປະເທດເອຢິບ. ຄົນທີ່ໄດ້ຊື້ ໂຢເຊັບ ມີຊື່ວ່າ ໂປຕີຟາ.

ໂປຕີຟາ ເປັນນາຍທະຫານຄົນໜຶ່ງ ຂອງກະສັດເອຢິບ. ເພິ່ນມີໜ້າທີ່ຮັບຜິດຊອບໃນພະລາຊະວັງ.



ພຣະຜູ້ເປັນເຈົ້າ ສະຖິດກັບ ໂຢເຊັບ ແລະບັນດານໃຫ້ທຸກສິ່ງທີ່ ໂຢເຊັບ ເຮັດເກີດຜົນດີ.

ໂປຕີຟາ ຈຶ່ງໄດ້ພໍໃຈຫລາຍກັບວຽກທີ່ ໂຢເຊັບ ໄດ້ເຮັດ ເລີຍແຕ່ງຕັ້ງໃຫ້ເປັນຄົນຮັບໃຊ້ປະຈຳຕົນ.



ໂປຕິຟາ ໄດ້ມອບຊັບສິ່ງຂອງທຸກຢ່າງຂອງຕົນໃຫ້ ໂຢເຊັບ ເປັນຜູ້ເບິ່ງແຍງຮັກສາແທນ ແລະເພິ່ນກໍບໍ່ໄດ້ກັງວົນສົນໃຈນຳສິ່ງໃດເລີຍ ນອກຈາກອາຫານທີ່ຕົນຈະກິນເທົ່ານັ້ນ.



ໂຢເຊັບ ເປັນຊາຍໜຸ່ມທີ່ມີຮູບຮ່າງໄດ້ສັດສ່ວນດີ ແລະໜ້າຕາງາມ. ແຕ່ແລ້ວບໍ່ດົນເທົ່າໃດ ເມຍຂອງນາຍ ກໍຫຼົງມັກ ໂຢເຊັບ ແລະຊວນລາວເຂົ້າໄປນອນນຳ.

ໂຢເຊັບ ປະຕິເສດ ແລະຕອບນາງວ່າ, “ເບິ່ງດູ ນາຍຂອງຂ້ອຍ ບໍ່ກັງວົນໃຈນຳສິ່ງໃດເລີຍ ຍ້ອນເພິ່ນໄວ້ເນື້ອເຊື່ອໃຈຂ້ອຍ. ຂ້ອຍມີອຳນາດໃນເຮືອນຫຼັງນີ້ ເທົ່າໆກັບເພິ່ນ. ເພິ່ນບໍ່ໄດ້ຫວງຫ້າມສິ່ງໃດເລີຍຈາກຂ້ອຍ ເວັ້ນໄວ້ແຕ່ຍານາງເອງ ທີ່ເປັນເມຍຂອງເພິ່ນ. ຂ້ອຍຈະກ້າລ່ວງປະເວນີ ແລະເຮັດບາບຕໍ່ ພຣະເຈົ້າ ໄດ້ຢ່າງໃດ?”

ເຖິງແມ່ນວ່າ ນາງຂໍຮ້ອງ ໂຢເຊັບ ຄູ່ມື້ຄູ່ເວັນ ແຕ່ ໂຢເຊັບ ກໍບໍ່ຍອມນອນນຳ.



ຕໍ່ມາມື້ໜຶ່ງ ເມື່ອ ໂຢເຊັບ ເຂົ້າໄປເຮັດວຽກຢູ່ໃນເຮືອນ ໃນມື້ນັ້ນ ບໍ່ມີຄົນໃຊ້ຈັກຄົນຢູ່ໃນເຮືອນ. ເມຍຂອງນາຍ ຈຶ່ງສວຍໂອກາດນັ້ນ ຈ່ອງເສື້ອລາວໄວ້ ແລະເວົ້າວ່າ, “ໄປນອນນຳຂ້ອຍສາ.”

ແຕ່ ໂຢເຊັບ ແລ່ນຫຼົບໜີອອກໄປຂ້າງນອກໄດ້ ໂດຍປະເສື້ອຂອງລາວຄາມືຂອງນາງໄວ້.



ນາງໄດ້ຮັກສາເສື້ອຂອງ ໂຢເຊັບ ໄວ້ ຈົນຜູ້ເປັນນາຍຂອງ ໂຢເຊັບ ກັບມາເຮືອນ.

ແລ້ວນາງກໍເລົ່າໃຫ້ຜົວຟັງວ່າ, “ຄົນເຮັບເລີ ຜູ້ທີ່ອ້າຍໄດ້ເອົາມາຢູ່ນຳນັ້ນ ລາວໄດ້ເຂົ້າມາ ເພື່ອຂົ່ມຂືນຂ້ອຍຢູ່ທີ່ຫ້ອງນອນ ແຕ່ເມື່ອຂ້ອຍຮ້ອງຂຶ້ນ ລາວກໍໄດ້ປະເສື້ອໄວ້ ແລ້ວແລ່ນໜີໄປ.”



ເມື່ອນາຍຂອງ ໂຢເຊັບ ໄດ້ຍິນເລື່ອງທີ່ເມຍຂອງຕົນເລົ່າສູ່ຟັງ ເພິ່ນກໍຮ້າຍຢ່າງໃຫຍ່ ແລະສັ່ງຂັງ ໂຢເຊັບ ໄວ້ໃນຄຸກ ບ່ອນທີ່ກະສັດຂັງນັກໂທດທັງຫລາຍ.

ໂຢເຊັບ ຈຶ່ງຖືກຂັງຄຸກ ພ້ອມກັບນັກໂທດຂອງກະສັດ ເອຢິບ ແຕ່ ພຣະຜູ້ເປັນເຈົ້າ ຍັງສະຖິດຢູ່ນຳ ໂຢເຊັບ ຢູ່ແລະອີດູລາວ.

ດັ່ງນັ້ນ ຫົວໜ້າຄຸກ ຈຶ່ງພໍອົກພໍໃຈນຳ ໂຢເຊັບ. ລາວໃຫ້ ໂຢເຊັບ ເປັນຜູ້ຕາງໜ້າຂອງເພິ່ນ ໃນການເບິ່ງແຍງນັກໂທດທັງຫຼາຍ ແລະໃຫ້ລາວຮັບຜິດຊອບວຽກງານທຸກໆຢ່າງຢູ່ໃນຄຸກ.



ຫົວໜ້າຄຸກບໍ່ໄດ້ກວດກາສິ່ງໃດໆທີ່ ໂຢເຊັບ ຮັບຜິດຊອບ ຍ້ອນວ່າ ພຣະຜູ້ເປັນເຈົ້າ ສະຖິດຢູ່ນຳລາວ ແລະເຮັດໃຫ້ລາວຫລ້ອນໜ້າທີ່ໃນວຽກງານທັງໝົດ.

ມື້ໜຶ່ງ ຫົວໜ້າພະນັກງານເຮັດເຫຼົ້າອະງຸ່ນ ກັບຫົວໜ້າພະນັກງານເຮັດເຂົ້າຈີ່ຂອງ ກະສັດເອຢິບ ໄດ້ເຮັດໃຫ້ກະສັດກິ້ວໂກດ. ເພິ່ນຈຶ່ງສັ່ງຂັງເຂົາທັງສອງ ທີ່ເຮືອນຂອງນາຍທະຫານຮັກສາພະລາຊະວັງ ຊຶ່ງເປັນບ່ອນດຽວກັນກັບບ່ອນທີ່ ໂຢເຊັບ ຖືກຂັງຢູ່ນັ້ນ.



ຄືນໜຶ່ງ ຫົວໜ້າພະນັກງານເຮັດເຫຼົ້າອະງຸ່ນ ກັບຫົວໜ້າພະນັກງານເຮັດເຂົ້າຈີ່ ໄດ້ມີຄວາມຝັນທີ່ແຕກຕ່າງກັນ.

ພໍຕື່ນເຊົ້າມາ ຄົນທີ່ເຮັດເຫຼົ້າອະງຸ່ນໄດ້ເລົ່າໃຫ້ ໂຢເຊັບ ຟັງວ່າ, “ຂ້ອຍໄດ້ຝັນ ເຫັນເຄືອອະງຸ່ນເຄືອໜຶ່ງ ທີ່ມີ 3 ງ່າ. ໃນ 3 ງ່ານັ້ນມີໝາກອະງຸ່ນສຸກເຕັມໄປໝົດ. ຂ້ອຍໄດ້ຍົກຈອກຂອງກະສັດຂຶ້ນ ແລ້ວບີບນ້ຳໝາກອະງຸ່ນ ລົງໃສ່ຈອກແລ້ວຍື່ນໃຫ້ເພິ່ນ.”

ໂຢເຊັບ ຕອບວ່າ, “ຂ້ອຍເອງຈະແປຄວາມຝັນໃຫ້ເຈົ້າບໍ່ໄດ້ ແຕ່ ພຣະຜູ້ເປັນເຈົ້າ ເຮັດໃຫ້ຂ້ອຍແປໄດ້. ຄວາມຝັນນີ້ມີຄວາມໝາຍວ່າ 3 ງ່າ ໝາຍເຖິງ 3 ມື້. ຕໍ່ຈາກນີ້ 3 ມື້ ກະສັດຈະປົດປ່ອຍເຈົ້າອອກຈາກຄຸກທັງຍົກໂທດໃຫ້ ແລະຄືນຕຳແໜ່ງເດີມໃຫ້ເຈົ້າ.”



ແລ້ວຄົນທີ່ເຮັດເຂົ້າຈີ່ ໄດ້ເລົ່າຄວາມຝັນໃຫ້ ໂຢເຊັບ ຟັງວ່າ, "ຂ້ອຍຝັນວ່າ ຂ້ອຍຖືຖາດເຂົ້າຈີ່ 3 ຖາດເທິງຫົວ ແລະນົກໄດ້ມາກິນເຂົ້າຈີ່ໝົດ."

ໂຢເຊັບ ຕອບວ່າ, "3 ຖາດໝາຍເຖິງ 3 ມື້. ໃນ 3 ມື້ກະສັດຈະເອົາເຈົ້າອອກຈາກຄຸກ ແລະສັ່ງຕັດຄໍເຈົ້າເສຍ ແລະເອົາຮ່າງກາຍຂອງເຈົ້າໄປແຂວນໄວ້ທີ່ຕົ້ນໄມ້ ແລ້ວຝູງນົກກໍຈະມາເຈາະກິນເນື້ອຂອງເຈົ້າ."

ຫຼັງຈາກນັ້ນ 3 ມື້ ກະສັດກໍມີງານວັນເກີດ ເພິ່ນໄດ້ຮັບພະນັກງານເຮັດເຫຼົ້າອະງຸ່ນ ກັບຄືນມາເຮັດວຽກຄືເກົ່າ ແລະໄດ້ຕັດຄໍພະນັກງານເຮັດເຂົ້າຈີ່ ຕາມທີ່ ໂຢເຊັບ ໄດ້ບອກໄວ້.



ຫຼັງຈາກນັ້ນມາ 2 ປີ ກະສັດເອຢິບ ໄດ້ຝັນວ່າ, ຕົນກຳລັງຢືນຢູ່ແຄມແມ່ນ້ຳນິນ. ຂະນະນັ້ນ ໄດ້ມີງົວແມ່ທີ່ຕຸ້ຍພີ 7 ໂຕຂຶ້ນມາຈາກແມ່ນ້ຳ. ແລ້ວຕໍ່ມາ ໄດ້ມີງົວແມ່ອີກ 7 ໂຕທີ່ຈ່ອຍຜອມ ຂຶ້ນມາຈາກແມ່ນ້ຳ. ງົວແມ່ທີ່ຈ່ອຍຜອມນັ້ນ ໄດ້ກືນກິນງົວແມ່ທີ່ຕຸ້ຍພີທັງ 7 ໂຕນັ້ນ. ແລ້ວກະສັດ ກໍຊວາດຮູ້ເມື່ອທັນທີ.

ອີກບໍ່ດົນ ເພິ່ນກໍໄດ້ເຜີຫລັບໄປອີກ ແລ້ວໄດ້ຝັນອີກວ່າ, ໄດ້ມີຮວງເຂົ້າທີ່ມີເມັດຕຶ່ງເຕັມດີ 7 ຮວງໄດ້ເກີດມາຈາກຕົ້ນດຽວກັນ ແລ້ວໄດ້ມີຮວງເຂົ້າອອກມາອີກ 7 ຮວງ ທີ່ມີເມັດລີບແລະຫ່ຽວແຫ້ງ. ແລ້ວຮວງເຂົ້າທີ່ລີບ ແລະຫ່ຽວແຫ້ງນັ້ນ ໄດ້ກືນກິນຮວງເຂົ້າ ທີ່ມີເມັດຕຶ່ງເຕັມໝົດທັງ 7 ຮວງນັ້ນ. ພໍຕື່ນເຊົ້າມື້ນັ້ນ ກະສັດເອຢິບ ກະວົນກະວາຍໃຈ ຍ້ອນຄວາມຝັນ ເພິ່ນຈຶ່ງເອີ້ນເອົາພວກໝໍມາ ແຕ່ກໍບໍ່ມີຜູ້ໃດສາມາດແກ້ຄວາມຝັນໃຫ້ເພິ່ນໄດ້.



ຫົວໜ້າພະນັກງານເຮັດເຫຼົ້າອະງຸ່ນ ຈຶ່ງຄິດພໍ້ ໂຢເຊັບ ທີ່ຢູ່ໃນຄຸກ ວ່າລາວອາດຈະແກ້ຄວາມຝັນໃຫ້ກະສັດໄດ້.

ກະສັດຈຶ່ງໄດ້ເອີ້ນເອົາ ໂຢເຊັບ ມາຫາ ແລະເລົ່າຄວາມຝັນໃຫ້ ໂຢເຊັບ ຟັງ.

ໂຢເຊັບ ຕອບວ່າ, “ຜູ້ຂ້າແກ້ຄວາມຝັນນັ້ນບໍ່ໄດ້ດອກ ແຕ່ພຣະຜູ້ເປັນເຈົ້າ ຕ່າງຫາກ ທີ່ແປຄວາມຝັນໄດ້.”

“ຄວາມຝັນ 2 ຢ່າງນີ້ ມີຄວາມໝາຍດຽວກັນ. ພຣະເຈົ້າ ໄດ້ໃຫ້ກະສັດຮູ້ເຖິງສິ່ງທີ່ ພຣະເຈົ້າ ຈະໃຫ້ເກີດຂຶ້ນ. ງົວແມ່ທີ່ຕຸ້ຍພີ ແລະຮວງເຂົ້າທີ່ມີເມັດຕຶ່ງເຕັມນັ້ນ ໝາຍເຖິງ 7 ປີ ທີ່ຈະມີແຕ່ຄວາມອຸດົມສົມບູນ.”

“ງົວແມ່ທີ່ຈ່ອຍຜອມ ກັບຮວງເຂົ້າທີ່ມີເມັດລີບ ໝາຍເຖິງ 7 ປີທີ່ຈະປະສົບພົບພໍ້ກັບຄວາມອຶດຢາກ.”



ໂຢເຊັບ ແນະນຳວ່າ ກະສັດຄວນຊອກຫາຄົນໜຶ່ງ ທີ່ສະຫຼາດສະຫຼຽວ ມາແຕ່ງຕັ້ງໃຫ້ເປັນຜູ້ປົກຄອງປະເທດ ເພື່ອເກັບຜົນລະປູກໜຶ່ງສ່ວນຫ້າ ຂອງແຜ່ນດິນເອົາໄວ້ ໃນລະຫວ່າງ 7 ປີ ທີ່ອຸດົມສົມບູນນັ້ນ. ອາຫານທີ່ເກັບໄວ້ນັ້ນ ຈະເປັນເຄື່ອງບັນເທົາທຸກສຳລັບເວລາອຶດຢາກໃນ 7 ປີ ທີ່ຈະຕາມມາພາຍຫລັງ. ໂດຍການເຮັດວິທີນີ້ ປະຊາຊົນຊາວເອຢິບ ຈຶ່ງຈະບໍ່ອຶດຕາຍ.

ກະສັດ ກັບຂ້າລາຊະການ ເຫັນພ້ອມກັບຄຳສະເໜີນີ້ ແລະກະສັດໄດ້ກ່າວແກ່ຂ້າລາຊະການວ່າ, “ພວກເຮົາຈະບໍ່ສາມາດຫາຄົນທີ່ດີກວ່າ ໂຢເຊັບ ໄດ້ເລີຍ ທີ່ມີ ພຣະວິນຍານ ສະຖິດຢູ່ນຳ.”

ກະສັດກ່າວແກ່ ໂຢເຊັບ ວ່າ, “ເຮົາຈະແຕ່ງຕັ້ງໃຫ້ເຈົ້າເປັນຜູ້ປົກຄອງປະເທດ. ເຈົ້າຈະເປັນໃຫ່ຍກວ່າທຸກຄົນ ຍົກເວັ້ນເຮົາຜູ້ດຽວເພາະເຮົາເປັນກະສັດ.”



ໂຢເຊັບ ມີອາຍຸ 30 ປີເມື່ອເຂົ້າຮັບໃຊ້ກະສັດແຫ່ງ ເອຢິບ. ເພິ່ນອອກໄປກວດກາທົ່ວປະເທດ ໃນໄລຍະ 7 ປີ ທີ່ອຸດົມສົມບຸນນັ້ນ. ໂຢເຊັບ ເກັບແລະຮັບໂຮມອາຫານທຸກຊະນິດໄວ້ ຕາມຫົວເມືອງຕ່າງໆ.

ອີກບໍ່ດົນ 7 ປີ ທີ່ອຸດົມສົມບຸນ ທີ່ປະເທດ ເອຢິບ ກໍໄດ້ສິ້ນສຸດລົງ ແລະ 7 ປີແຫ່ງຄວາມອຶດຢາກ ກໍເກີດຂຶ້ນມາແທນ.



ພໍ່ ແລະພວກອ້າຍຂອງ ໂຢເຊັບ ເລີ່ມຂາດເຂີນ ບໍ່ມີອາຫານການກິນ ພໍ່ຈຶ່ງບອກໃຫ້ລູກຊາຍ ໄປທີ່ ປະເທດເອຢິບ ເພື່ອຊື້ເຂົ້າ.

ແຕ່ພໍ່ບໍ່ໃຫ້ ເບັນຢາມິນ ນ້ອງຊາຍຄີງໆ ຂອງ ໂຢເຊັບ ໄປນໍາເພາະຢ້ານມີອັນຕະລາຍເກີດຂຶ້ນກັບລາວ.



ເມື່ອອ້າຍຂອງ ໂຢເຊັບ ເດີນທາງຮອດວັງຂອງປະເທດເອຢິບແລ້ວ ພວກເຂົາກໍໄດ້ຂາບລົງຕໍ່ໜ້າ ໂຢເຊັບ ໂດຍບໍ່ຮູ້ວ່າແມ່ນ ໂຢເຊັບ ຜູ້ເປັນນ້ອງຊາຍຂອງພວກຕົນ.

ເມື່ອ ໂຢເຊັບ ເຫັນພວກອ້າຍ ເພິ່ນກໍຈື່ພວກເຂົາໄດ້ ແຕ່ເພິ່ນເຮັດຄືບໍ່ຮູ້ຈັກພວກເຂົາ. ແລ້ວ ໂຢເຊັບ ກໍຄຶດເຫັນຄວາມຝັນ ທີ່ຕົນເຄີຍຝັນຕອນຍັງນ້ອຍ.

ໂຢເຊັບ ເວົ້າກັບພວກອ້າຍວ່າ, “ພວກເຈົ້າເປັນນັກສືບ. ພວກເຈົ້າມາທີ່ນີ້ ເພື່ອເບິ່ງຈຸດອ່ອນຂອງປະເທດເຮົາ.”



ພວກເຂົາເວົ້າວ່າ, "ອາດຍາເອີຍ ພວກຜູ້ຂ້າ ມີອ້າຍນ້ອງນໍາກັນ 12 ຄົນ ທີ່ເກີດຈາກພໍ່ດຽວກັນ ທີ່ການາອານ. ນ້ອງຊາຍຜູ້ໜຶ່ງໄດ້ຕາຍໄປແລ້ວ ແລະນ້ອງຊາຍຫຼ້າຍັງຢູ່ນໍາພໍ່."

ໂຢເຊັບ ຕອບວ່າ, "ແມ່ນຄືຂ້ອຍເວົ້າແທ້ໆ. ພວກເຈົ້າເປັນນັກສືບອີຫຼີ. ສິ່ງນີ້ຈະເປັນເຄື່ອງພິສູດພວກເຈົ້າ, ໃຫ້ຄົນໜຶ່ງຖືກຄຸກຄອຍຖ້າຢູ່ນີ້. ສ່ວນທີ່ເຫຼືອ ໃຫ້ໄປນໍາເອົານ້ອງຊາຍຫຼ້າ ຂອງພວກເຈົ້າມາ. ເມື່ອພວກເຈົ້າກັບມາ ພ້ອມກັບນ້ອງຊາຍຫຼ້າ ຂ້ອຍຈຶ່ງຈະເຊື່ອວ່າພວກເຈົ້າບໍ່ແມ່ນນັກສືບ. ຖ້າພວກເຈົ້າບໍ່ກັບມາພ້ອມກັບນ້ອງຊາຍຫຼ້າກໍສະແດງວ່າ ພວກເຈົ້າເປັນນັກສືບ."



ພວກເຂົາເວົ້າຕໍ່ກັນວ່າ, “ນີ້ກໍເປັນໂທດກຳ ຂອງພວກເຮົາ ຍ້ອນສິ່ງທີ່ພວກເຮົາໄດ້ເຮັດຕໍ່ນ້ອງຊາຍ. ພວກເຮົາໄດ້ເຫັນວ່າ ລາວເປັນທຸກສໍ່າໃດ ເມື່ອລາວອ້ອນວອນຂໍຄວາມເມດຕາ, ແຕ່ພວກເຮົາກໍບໍ່ໄດ້ຍອມຟັງສຽງຂອງລາວເລີຍ.  ບັດນີ້ແຫຼະ ກຳຈຶ່ງນຳມາຕອບສະໜອງພວກເຮົາ.”

ໂຢເຊັບ ເຂົ້າໃຈເລື່ອງ ທີ່ພວກເຂົາເວົ້າກັນ, ແລ້ວເພິ່ນຈຶ່ງຫຼີບໜີຈາກພວກເຂົາ ແລະໄປລີ້ຮ້ອງໄຫ້ຢູ່ໃນຫ້ອງຜູ້ດຽວ.



ເມື່ອ ໂຢເຊັບ ຕັ້ງສະຕິໄດ້ແລ້ວ ເພິ່ນກໍກັບມາຫາພວກອ້າຍອີກ ແລະໄດ້ສັ່ງໃຫ້ເອົາ ຊີເມໂອນ ມາມັດໄວ້ ແລ້ວເອົາໄປຂັງຄຸກ.

ໂຢເຊັບ ສັ່ງຄົນໃຊ້ ໃຫ້ເອົາເຂົ້າໃສ່ຖົງພວກເຂົາຈົນເຕັມ ແລະເອົາເງິນຂອງແຕ່ລະຄົນ ໃສ່ໄວ້ເທິງເຂົ້າໃນຖົງນັ້ນຄືນ ແລະເອົາອາຫານໃຫ້ພວກເຂົາ ໄປກິນນຳທາງດ້ວຍ.

ຄົນໃຊ້ຂອງເພິ່ນ ກໍເຮັດຕາມຄຳສັ່ງທຸກປະການ.



ພວກອ້າຍຂອງ ໂຢເຊັບ ອອກເດີນທາງເມືອ.

ພໍພວກເຂົາຮອດບ່ອນພັກເຊົາແຮມຄືນແຫ່ງໜຶ່ງ ມີຄົນໜຶ່ງໃນພວກເຂົາ ໄດ້ໄຂຖົງເພື່ອເອົາເຟືອງໃຫ້ລໍກິນ. ລາວເລີຍພົບເງິນຢູ່ໃນປາກຂອງຖົງເຂົ້ານັ້ນ.

ພວກເຂົາຕ່າງ ກໍຕົກໃຈຢ້ານກົວ ຈົນຕົວສັ່ນ ແລະຖາມກັນວ່າ, "ເປັນຫຍັງ ພຣະເຈົ້າ ຈຶ່ງເຮັດກັບພວກເຮົາເຊັ່ນນີ້?"



ເມື່ອພວກເຂົາກັບມາຮອດບ້ານແລ້ວ ກໍໄດ້ເລົ່າເຫດການຕ່າງໆ ທີ່ເກີດຂຶ້ນກັບພວກຕົນ ສູ່ພໍ່ຟັງ.

ພໍ່ກໍຮູ້ສຶກຢ້ານຢ່າງໃຫ່ຍ. ລາວເວົ້າຂຶ້ນວ່າ, “ໂຢເຊັບ ກໍໄດ້ຕາຍໄປແລ້ວ. ຊີເມໂອນ ກໍຖືກຈັບ. ບັດນີ້ ພວກເຈົ້າຍັງຈະເອົາເບັນຢາມິນ ໜີໄປຈາກຂ້ອຍອີກ. ຂ້ອຍຊ່າງມາທຸກລະທົມໃຈຫຼາຍແທ້ນໍ.”

ພໍ່ເວົ້າຕື່ມວ່າ, “ຂ້ອຍຈະບໍ່ຍອມໃຫ້ລູກຂ້ອຍ ໄປນຳພວກເຈົ້າ. ຂ້ອຍເຖົ້າແກ່ຫຼາຍແລ້ວ ແລະຄວາມທຸກໃຈ ທີ່ພວກເຈົ້າກໍ່ຂຶ້ນນີ້ອາດຈະເຮັດໃຫ້ຂ້ອຍ ຊ້ຳໃຈຕາຍກໍໄດ້.”



ຄວາມອຶດຢາກໃນ ເມືອງການາອານ ກໍຮ້າຍແຮງໜັກຂຶ້ນເລື້ອຍໆ ແລ້ວຜູ້ເປັນພໍ່ ກໍໄດ້ບອກພວກລູກຊາຍວ່າ, "ຈົ່ງກັບຄືນໄປຊື້ອາຫານຕື່ມ."

ຢູດາ ຕອບວ່າ. "ຜູ້ປົກຄອງເອຢິບ ໄດ້ເວົ້າກັບພວກເຮົາວ່າ ຢ່າໄປໃຫ້ເພິ່ນເຫັນໜ້າອີກ ຈົນກວ່າພວກເຮົາຈະນຳນ້ອງຫຼ້າໄປດ້ວຍ. ໃຫ້ນ້ອງໄປສາ. ລູກຈະຍອມອຸທິດຊີວິດຂອງຕົນເອງເພື່ອລາວ. ໃຫ້ພໍ່ມອບຄວາມຮັບຜິດຊອບໃຫ້ລູກໂລດ. ຖ້າລູກບໍ່ນຳລາວກັບຄືນມາໄດ້ຢ່າງປອດໄພ ລູກຈະຍອມເປັນຜູ້ຮັບຜິດຊອບ ຕໍ່ພໍ່ຕະຫຼອດຊີວິດ.

ພໍ່ຈຶ່ງຕົກລົງໃຫ້ ເບັນຢາມິນ ໄປກັບພວກເຂົາ, ແລະໄດ້ສັ່ງໃຫ້ເອົາຂອງຂວັນຢ່າງດີທີ່ສຸດ ທີ່ມີໃນດິນແດນ ການາອານ ໄປຕ້ອນຜູ້ປົກຄອງຄົນນັ້ນ ແລະໃຫ້ຖືເງິນໄປນຳສອງເທົ່າ ເພື່ອສົ່ງຄືນເງິນທີ່ໄດ້ພົບໃນປາກຖົງເຂົ້າ ແລະເພື່ອຊື້ອາຫານຈຳນວນໃໝ່.



ເມື່ອໄປຮອດ ພວກເຂົາກໍເຂົ້າໄປຫາ ໂຢເຊັບ. ພໍ ໂຢເຊັບ ເຫັນ ເບັນຢາມິນ ເພິ່ນຈຶ່ງສັ່ງຄົນໃຊ້ ໃຫ້ພາຄົນເຫຼົ່ານີ້ໄປເຮືອນຂອງ ເພິ່ນ ເພາະຕອນທ່ຽງຄົນເຫຼົ່ານີ້ ຈະກິນເຂົ້ານຳເພິ່ນ.

ເມື່ອຮອດເຮືອນຂອງ ໂຢເຊັບ ພວກເຂົາໄດ້ເວົ້າກັບຄົນໃຊ້ທີ່ ພາພວກເຂົາມາວ່າ, “ເມື່ອຄາວພວກຜູ້ຂ້າມາຊື້ສະບຽງອາຫານຖ້ຽວ ກ່ອນນັ້ນ ພໍຮອດທີ່ພັກ ພວກຜູ້ຂ້າໄຂຖົງເຂົ້າ ແລະແຕ່ລະຄົນກໍພົບ ເງິນ ທີ່ໄດ້ຈ່າຍຊື້ເຂົ້າຄົບຕາມຈຳນວນເດີມ. ພວກຜູ້ຂ້າ ຈຶ່ງນຳເອົາ ເງິນມາຄືນ ແລະຈະຊື້ອາຫານໃໝ່. ພວກຜູ້ຂ້າບໍ່ຮູ້ວ່າ ເງິນນັ້ນເຂົ້າມາ ຢູ່ໃນຖົງໄດ້ແນວໃດ.”

ຄົນໃຊ້ເວົ້າວ່າ, “ຢ່າອຸກໃຈ ແລະຢ້ານກົວເລີຍ. ພຣະເຈົ້າ ຂອງພວກເຈົ້າ ອົງທີ່ເປັນ ພຣະເຈົ້າ ຂອງພໍ່ພວກເຈົ້າ ໄດ້ເອົາເງິນນີ້ໃສ່ ຖົງເຂົ້າໃຫ້ພວກເຈົ້າ. ເງິນທີ່ພວກເຈົ້າຈ່າຍນັ້ນ ຂ້ອຍໄດ້ຮັບເປັນ ທີ່ຮຽບຮ້ອຍແລ້ວ.”



ຄົນໃຊ້ພາພວກອ້າຍນ້ອງຂອງ ໂຢເຊັບ ເຂົ້າໄປໃນເຮືອນ. ລາວເອົານໍ້າໃຫພວກເຂົາລ້າງຕີນ ແລະເອົາເຟືອງໃຫ້ລໍຂອງພວກເຂົາກິນ.

ເມື່ອ ໂຢເຊັບ ກັບມາເຮືອນ ພວກເຂົາເອົາຂອງຕ້ອນ ມອບໃຫ້ ໂຢເຊັບ ແລະຂາບລົງຕໍ່ໜ້າເພິ່ນ.

ໂຢເຊັບ ຖາມພວກເຂົາວ່າ, “ພໍ່ຂອງພວກເຈົ້າເປັນແນວໃດ? ເພິ່ນຍັງມີຊີວິດຢູ່ ແລະຍັງສະບາຍດີບໍ?”

ພວກເຂົາຕອບວ່າ, “ພໍ່ຂອງພວກຂ້ານ້ອຍ ຍັງມີຊີວິດຢູ່ ແລະຍັງສະບາຍດີ.”

ເມື່ອ ໂຢເຊັບ ເຫັນ ເບັນຢາມິນ ນ້ອງຊາຍຄີງໆ ຂອງຕົນ ເພິ່ນກໍເວົ້າວ່າ, “ຊາຍຄົນນີ້ ຄົງເປັນນ້ອງຊາຍຫຼ້າ ຂອງພວກເຈົ້າ ຄົນທີ່ພວກເຈົ້າເລົ່າໃຫ້ເຮົາຟັງເມື່ອຄັ້ງກ່ອນ ແມ່ນບໍ?”



ໂຢເຊັບ ຟ້າວຍ່າງອອກໄປທັນທີ ເພາະເພິ່ນຕື້ນຕັນໃຈ. ເພິ່ນເກືອບຮ້ອງໄຫ້ ຕໍ່ໜ້າພວກເຂົາ. ສະນັ້ນ ເພິ່ນຈຶ່ງເຂົ້າໄປລີ້ ຮ້ອງໄຫ້ຢູ່ໃນຫ້ອງສ່ວນຕົວ.

ຫຼັງຈາກລ້າງໜ້າລ້າງຕາແລ້ວ ເພິ່ນຈຶ່ງອອກມາຂ້າງນອກ ແລະໄດ້ສັ່ງຄົນໃຫ້ຈັດແຈງອາຫານມາ. ເຂົາໄດ້ຈັດແຈ່ງໂຕະໃຫ້ ໂຢເຊັບ ກິນຜູ້ດຽວຕ່າງຫາກ ແລະຈັດແຈ່ງໃຫ້ພວກອ້າຍນ້ອງຂອງ ໂຢເຊັບ ກິນໂຕະໜຶ່ງຕ່າງຫາກ.



ພໍຮອດເວລາທີ່ພວກອ້າຍນ້ອງຂອງ ໂຢເຊັບ ຈະກັບ
ການາອານ ໂຢເຊັບ ໄດ້ບອກໃຫ້ຄົນຮັບຜິດຊອບໃນເຮືອນວ່າ,
"ຈົ່ງເອົາສະບຽງອາຫານໃສ່ຖົງຂອງຄົນເຫຼົ່ານີ້ ແລະໃຫ້ເອົາເງິນຂອງ
ແຕ່ລະຄົນ ໃສ່ໃນຖົງເທິງເຂົ້າຂອງແຕ່ລະຖົງ. ໃຫ້ເອົາຈອກເງິນຂອງ
ເຮົາ ໃສ່ໃນຖົງເຂົ້າຂອງນ້ອງຊາຍຫຼ້າ ຂອງພວກເຂົາ."

ຄົນໃຊ້ກໍໄດ້ປະຕິບັດຕາມທີ່ ໂຢເຊັບ ສັ່ງ.



ເມື່ອຮຸ່ງເຊົ້າຂຶ້ນມາ ພວກເຂົາຈຶ່ງອອກເດີນທາງກັບເມືອ ພ້ອມດ້ວຍລໍຂອງພວກເຂົາ.

ໂຢເຊັບ ໄດ້ກ່າວແກ່ຄົນຮັບໃຊ້ຂອງຕົນວ່າ, "ຈົ່ງຮີບອອກໄປຕິດຕາມຄົນເຫຼົ່ານັ້ນ. ເມື່ອທັນພວກເຂົາແລ້ວ ໃຫ້ຖາມເຂົາວ່າ, "ເປັນຫຍັງພວກເຈົ້າຈຶ່ງປະພຶດການຊົ່ວຕອບແທນການດີ? ເປັນຫຍັງຈຶ່ງລັກເອົາຈອກເງິນຂອງນາຍຂ້ອຍ?"

ເມື່ອຄົນໃຊ້ຕາມພວກເຂົາໄປທັນແລ້ວ ລາວກໍໄດ້ເວົ້າດັ່ງທີ່ນາຍສັ່ງ.



ພວກເຂົາຈຶ່ງຕອບວ່າ, “ອາດຍາ ເວົ້າເຊັ່ນນີ້ໝາຍຄວາມວ່າ ແນວໃດ? ພວກເຮົາບໍ່ເຄີຍທຳສິ່ງນັ້ນຈັກເທື່ອ. ເອົາເທາະ ໃນພວກ ເຮົານີ້ ຖ້າຈອກເງິນຕົກຢູ່ນຳຜູ້ໃດ ໃຫ້ອາດຍາ ຂ້າຜູ້ນັ້ນຖິ້ມໂລດ ແລະ ພວກເຮົາທຸກຄົນ ຈະຍອມເປັນທາດຂອງທ່ານ ຕະຫຼອດໄປ.”

ຄົນໃຊ້ເວົ້າວ່າ, “ຕົກລົງ! ແຕ່ຖ້າຂ້ອຍພົບຈອກນັ້ນ ຢູ່ນຳຜູ້ໃດ ຜູ້ນັ້ນຈະຕ້ອງເປັນທາດຂອງຂ້ອຍ. ນອກນັ້ນ ໃຫ້ກັບໄປຢ່າງ ອິດສະຫຼະ.”



ດັ່ງນັ້ນ ພວກເຂົາຈຶ່ງຟ້າວເອົາຖົງສະບຽງອາຫານ ລົງຈາກຫລັງລໍ.

ແລ້ວໃນທີ່ສຸດ ກໍພົບຈອກນັ້ນ ຢູ່ໃນຖົງຂອງ ເບັນຢາມິນ.

ດັ່ງນັ້ນ ພວກເຂົາຈຶ່ງຈີກເສື້ອຂອງຕົນ ດ້ວຍຄວາມເສຍໃຈ. ພວກເຂົາໄດ້ເອົາຖົງຂຶ້ນຫຼັງລໍຄືນ ແລະກັບເຂົ້າມາໃນເມືອງອີກ.

ພໍດີໃນຂະນະນັ້ນ ໂຢເຊັບ ກໍຍັງຢູ່ໃນເຮືອນ ພວກເຂົາຈຶ່ງພາກັນກົ້ມຂາບລົງຕໍ່ໜ້າເພິ່ນ.



ໂຢເຊັບ ເວົ້າຂຶ້ນວ່າ, "ເປັນຫຍັງ ພວກເຈົ້າຈຶ່ງເຮັດເຊັ່ນນີ້? ພວກເຈົ້າ ບໍ່ຮູ້ບໍວ່າຄົນຄືຂ້ອຍນີ້ມີຕາທິບ?"

ຢູດາ ເວົ້າວ່າ, "ຜູ້ຂ້າບໍ່ຮູ້ຈະເວົ້າແນວໃດກັບທ່ານແລ້ວ. ພຣະເຈົ້າໄດ້ປະຈານຂາຍໜ້າຄວາມຜິດຂອງພວກຜູ້ຂ້າແລ້ວ. ບັດນີ້ ພວກຜູ້ຂ້າທຸກຄົນ ຕົກເປັນທາດຂອງທ່ານແລ້ວ ແລະບໍ່ແມ່ນແຕ່ຜູ້ດຽວ ທີ່ທ່ານໄດ້ພົບຈອກເງິນນຳເທົ່ານັ້ນ."

ໂຢເຊັບ ເວົ້າວ່າ, "ບໍ່ໄດ້! ພຽງແຕ່ຄົນທີ່ຂ້ອຍພົບຈອກເງິນນຳເທົ່ານັ້ນ ທີ່ຈະຕົກເປັນທາດຂອງຂ້ອຍ."

ຢູດາ ໄດ້ຂໍຮ້ອງວ່າ, "ຜູຂ້າບໍ່ສາມາດກັບຄືນໄປຫາພໍ່ ໂດຍທີ່ບໍ່ມີເບັນຢາມິນ ໄປນຳ. ຖ້າພໍ່ບໍ່ເຫັນ ເບັນຢາມິນ ພໍ່ກໍຈະລະທົມໃຈຕາຍ. ຜູ້ຂ້າໄດ້ເອົາຊີວິດຂອງຜູ້ຂ້າເອງ ປະກັນແທນເດັກຄົນນີ້."

"ຜູ້ຂ້າບອກເພິ່ນວ່າ, "ຖ້າບໍ່ນຳລາວກັບຄືນເມືອຫາພໍ່ ຜູ້ຂ້າກໍຈະເປັນຜູ້ຮັບຄຳຕ້ອງຕິທຸກຢ່າງຈາກເພິ່ນຈົນຊົ່ວຊີວິດ. ໃຫ້ຜູ້ຂ້າຢູ່ທີ່ນີ້ຮັບໃຊ້ທ່ານແທນ ເບັນຢາມິນ. ໃຫ້ລາວກັບຄືນເມືອ ການາອານ ພ້ອມກັບພວກອ້າຍຂອງລາວສາ."



ໂຢເຊັບ ບໍ່ສາມາດອົດກັ້ນນ້ຳຕາໄວ້ໄດ້ ສະນັ້ນເພິ່ນຈຶ່ງສັ່ງໃຫ້ພວກຄົນຮັບໃຊ້ອອກໄປໝົດ.

ເມື່ອ ໂຢເຊັບ ກ່າວແກ່ພວກອ້າຍນ້ອງຂອງຕົນວ່າ ເພິ່ນແມ່ນໃຜນັ້ນ ບໍ່ມີຄົນອື່ນຢູ່ໃນເຮືອນເລີຍ.

ເພິ່ນຮ້ອງໄຫ້ສຽງດັງ ຈົນຊາວ ເອຢິບ ໄດ້ຍິນ ແລະຂ່າວຈຶ່ງແຜ່ໄປເຖິງ ພະລາຊາວັງ.

ໂຢເຊັບ ກ່າວແກ່ພວກອ້າຍຂອງຕົນວ່າ, “ຂ້ອຍແມ່ນ ໂຢເຊັບ. ພໍ່ຂອງຂ້ອຍ ຍັງມີຊີວິດຢູ່ບໍ?”



ໂຢເຊັບ ບອກໃຫ້ພວກເຂົາຫຍັບເຂົ້າມາໃກ້ໆ ແລ້ວເວົ້າເປັນເທື່ອທີສອງວ່າ, “ຂ້ອຍແມ່ນ ໂຢເຊັບ ນ້ອງຊາຍຂອງພວກເຈົ້າ ຜູ້ທີ່ພວກເຈົ້າໄດ້ຂາຍມາຍັງປະເທດເອຢິບ.”

“ບັດນີ້ ຢ່າເປັນທຸກໃຈທີ່ໄດ້ຂາຍຂ້ອຍມາທີ່ນີ້. ແມ່ນ ພຣະເຈົ້າທີ່ໄດ້ສົ່ງຂ້ອຍມາກ່ອນ ເພື່ອຊ່ວຍຊີວິດຂອງພວກເຈົ້າໄວ້. ດັ່ງນັ້ນ ຈຶ່ງບໍ່ແມ່ນພວກເຈົ້າ ທີ່ໄດ້ສົ່ງຂ້ອຍມາທີ່ນີ້ ແຕ່ແມ່ນ ພຣະເຈົ້າ ຕ່າງຫາກທີ່ໄດ້ສົ່ງຂ້ອຍມາ. ພຣະອົງ ບັນດານໃຫ້ຂ້ອຍເປັນຜູ້ຮັບຜິດຊອບປະເທດທັງໝົດ.”

“ບັດນີ້ຈົ່ງພາກັນກັບເມືອ ຫາພໍ່ຂອງຂ້ອຍ  ແລະບອກໃຫ້ເພິ່ນມາຫາຂ້ອຍໄວທີ່ສຸດ. ຂ້ອຍຈະເປັນຄົນເບິ່ງແຍງເພິ່ນເອງ.”



ເມື່ອຂ່າວໄດ້ແຜ່ໄປເຖິງພະລາຊາວັງ ກະສັດກໍມີຄວາມຍິນດີນຳ. ກະສັດກ່າວຕໍ່ ໂຢເຊັບ ວ່າ, “ຈົ່ງບອກໃຫ້ພວກອ້າຍນ້ອງຂອງເຈົ້າບັນທຸກເອົາສິ່ງຂອງ ກັບຄືນເມືອການາອານ. ໃຫ້ພວກເຂົາເມືອ ເອົາພໍ່ແລະຄອບຄົວຂອງພວກເຂົາ ກັບມາທີ່ນີ້. ເຮົາຈະມອບທີ່ດິນບ່ອນທີ່ອຸດົມສົມບູນທີ່ສຸດ ໃນປະເທດ ເອຢິບ ໃຫ້ພວກເຂົາ.”

ເມື່ອພວກອ້າຍຂອງ ໂຢເຊັບ ໄດ້ເມືອຮອດ ການາອານ ແລ້ວພວກເຂົາໄດ້ເລົ່າຄຳເວົ້າຂອງ ໂຢເຊັບ ສູ່ພໍ່ຟັງ.

ພໍໄດ້ຍິນ ພໍ່ກໍຕົກຕະລຶງ ແລະຍັງບໍ່ເຊື່ອຄຳເວົ້າເທື່ອ. ແຕ່ພໍເຫັນກວຽນທີ່ ໂຢເຊັບ ໄດ້ສົ່ງມາຮັບໄປປະເທດ ເອຢິບ ເພິ່ນກໍຕື່ນເຕັ້ນດີໃຈຫຼາຍ.



ເພິ່ນເວົ້າວ່າ, “ພໍແລ້ວບັດນີ້. ໂຢເຊັບ ລູກຊາຍຂອງຂ້ອຍ ຍັງມີຊີວິດຢູ່. ຂ້ອຍຕ້ອງໄປພົບລາວ ກ່ອນທີ່ຂ້ອຍຈະຕາຍ.”

ພໍ່ແລະຄອບຄົວ ກໍໄດ້ເດີນທາງໄປດຳລົງຊີວິດຢູ່ທີ່ ປະເທດເອຢິບ.

ໂຢເຊັບ ໄດ້ດູແລພໍ່ຂອງລາວ ຈົນຮອດເວລາທີ່ເພິ່ນສິ້ນໃຈຕາຍ.

ພໍ່ຂອງ ໂຢເຊັບ ອາໄສຢູ່ໃນປະເທດເອຢິບ 17 ປີ ຈົນເພິ່ນອາຍຸໄດ້ 147 ປີ.



ຫຼັງຈາກພໍ່ຂອງພວກເຂົາໄດ້ຕາຍໄປແລ້ວ ພວກອ້າຍຂອງ ໂຢເຊັບ ຈຶ່ງປຶກສາກັນວ່າ, "ພວກເຮົາຈະເຮັດແນວໃດດີ? ໂຢເຊັບ ອາດຍັງຊັງພວກເຮົາຢູ່ ກໍເປັນໄດ້ ແລະອາດວາງແຜນແກ້ແຄ້ນການ ຊົ່ວຊ້າທຸກຢ່າງ ທີ່ພວກເຮົາໄດ້ເຮັດ ຕໍ່ລາວນັ້ນກໍໄດ້!"

ດັ່ງນັ້ນ ພວກເຂົາຈຶ່ງສັ່ງຄວາມໄປຫາ ໂຢເຊັບ ວ່າ, "ກ່ອນ ພໍ່ຕາຍ ເພິ່ນໄດ້ສັ່ງໄວ້ກັບພວກເຮົາ ໃຫ້ມາບອກເຈົ້າວ່າ ລູກຈົ່ງກະລຸ ນາ ຍົກຄວາມຜິດ ທີ່ພວກອ້າຍຂອງເຈົ້າ ໄດ້ເຮັດຕໍ່ເຈົ້າເດີ. ບັດນີ້ ກະລຸນາຍົກຄວາມຜິດ ທີ່ພວກເຮົາ ຜູ້ຮັບໃຊ້ ພຣະເຈົ້າ ຂອງພໍ່ເຈົ້າ ໄດ້ ເຮັດມານັ້ນເຖີ້ນ."

ເມື່ອ ໂຢເຊັບ ໄດ້ຍິນເລື່ອງນີ້ແລ້ວ ເພິ່ນກໍຮ້ອງໄຫ້.

ແລ້ວພວກອ້າຍຂອງ ໂຢເຊັບ ກໍມາຫາ ໂຢເຊັບ ດ້ວຍຕົນເອງ ແລະຂາບລົງຕໍ່ໜ້າເພິ່ນ.

ພວກເຂົາເວົ້າວ່າ, “ພວກເຮົາຢູ່ທີ່ນີ້ ເໝືອນຜູ້ຮັບໃຊ້ຂອງທ່ານ.”

ແຕ່ ໂຢເຊັບ ໄດ້ຕອບພວກເຂົາວ່າ, “ຢ່າຢ້ານເລີຍ. ຂ້ອຍບໍ່ສາມາດຍົກໂຕເອງຂຶ້ນໄປແທນ ພຣະເຈົ້າ ໄດ້ດອກ.”

“ພວກເຈົ້າໄດ້ເຮັດເລື່ອງຊົ່ວຊ້າຕໍ່ຂ້ອຍ ແຕ່ ພຣະເຈົ້າ ໄດ້ຫັນປ່ຽນໃຫ້ເປັນເລື່ອງດີ ເພື່ອຊ່ວຍຊີວິດ ຂອງຫຼາຍໆຄົນ ໃຫ້ຍັງມີຊີວິດຢູ່ໄດ້ ຈົນທຸກມື້ນີ້.”

“ບັດນີ້ຢ່າຢ້ານເລີຍ ຂ້ອຍຈະປົກປັກຮັກສາພວກເຈົ້າ ພ້ອມທັງລູກຫຼານ ຂອງພວກເຈົ້າທຸກຄົນ.”

ເພິ່ນເວົ້າອິ່ນອອຍໃຈພວກເຂົາ ດ້ວຍຖ້ອຍຄຳທີ່ຈັບໃຈ ແລະໜ້າຟັງ.

ໂຢເຊັບ ສືບຕໍ່ອາໄສຢູ່ ໃນປະເທດເອຢິບ ກັບຄອບຄົວພວກອ້າຍນ້ອງຂອງຕົນ. ເພິ່ນຕາຍໄປ ເມື່ອອາຍຸໄດ້ 110 ປີ. ເພິ່ນມີຊີວິດຢູ່ຈົນເຫັນລູກແລະຫຼານ.

ຖ້າທ່ານຫາກສົນໃຈຢາກຮູ້ລາຍລະອຽດຕື່ມ
ທ່ານສາມາດອ່ານໄດ້ໃນ
ພຣະຄໍາພີ ປະຖົມມະການ ບົດທີ 37 ຫາ ບົດທີ 50.